Providence

ເປັນ

| ເລື່ອງ: ນະໂຍບາຍຊ່ວຍເຫຼືອດ້ານການເງິນ (ການດູແລປິ່ນປົວເພື່ອການກຸສົນ) ຂອງ Providence - Washington | ເລກທີນະໂຍບາຍ: PSJH RCM 002 WA | |
|---|---|---|
| ພະແນກ: ຈັດການຮອບວຽນລາຍໄດ້ (Revenue Cycle Management) | ☒ ແກ້ໄຂແລ້ວ<br>☐ ໃໝ່<br>☐ ກວດສອບແລ້ວ | ວັນທີ: 02/16/2023 |
| ຜູ້ອຸປະຖຳກິຕິມະສັກ: ເຈົ້າໜ້າທີ່ຮອບວຽນລາຍໄດ້ຫຼັກ SVP (SVP Chief Revenue Cycle Officer) | ເຈົ້າຂອງນະໂຍບາຍ: ຜູ້ອຳນວຍການຝ່າຍໃຫ້ຄຳປຶກສາດ້ານການເງິນ (Executive Director Financial Counseling) | |
| ອະນຸມັດໂດຍ: ເຈົ້າໜ້າທີ່ຮອບວຽນລາຍໄດ້ຫຼັກ SVP (SVP Chief Revenue Cycle Officer) | ວັນທີຈັດຕັ້ງປະຕິບັດ: 04/01/2023 | |

Providence ແມ່ນອົງການຈັດຕັ້ງແຄທໍລິກເພື່ອສຸຂະພາບທີ່ບໍ່ຫວັງຜົນກຳໄລ ທີ່ໄດ້ຮັບການຊີ້ນຳຕາມຄວາມມຸ່ງໝັ້ນຕໍ່ພາລະກິດຂອງຕົນໃນການຮັບໃຊ້ທຸກຄົນ, ໂດຍສະເພາະຜູ້ທີ່ທຸກຍາກ ແລະ ທີ່ມີຄວາມບອບບາງ, ຕາມຄຸນຄ່າຫຼັກຂອງອົງການໃນການມີຄວາມເມດຕາ, ກຽດ, ຄວາມຍຸຕິທຳ, ຄວາມເປັນເລີດ ແລະ ຄວາມຊື່ສັດ ແລະ ຕາມຄວາມເຊື່ອວ່າສຸຂະພາບແມ່ນສິດທິມະນຸດ. ປັດຊະຍາ ແລະ ຫຼັກການປະຕິບັດຂອງໂຮງໝໍ Providence ແຕ່ລະແຫ່ງກໍຄື ການບໍລິການດ້ານສຸຂະພາບທີ່ປາກົດມີ ແລະ ທີ່ຈຳເປັນທາງການແພດ ແມ່ນມີພ້ອມໃຫ້ແກ່ຜູ້ທີ່ຢູ່ໃນຊຸມຊົນທີ່ພວກເຮົາຮັບໃຊ້ ໂດຍບໍ່ຄຳນຶງເຖິງຄວາມສາມາດຂອງເຂົາເຈົ້າໃນການຈ່າຍຄ່າບໍລິການ.

**ຂອບເຂດ:**
ນະໂຍບາຍດັ່ງກ່າວນີ້ແມ່ນມີຜົນນຳໃຊ້ກັບໂຮງໝໍ Providence Washington (“Providence”) ໃນລັດ Washington ແລະ ຕໍ່ກັບການບໍລິການທີ່ສຸກເສີນ, ທີ່ຮີບດ່ວນ ແລະ ທີ່ມີຄວາມຈຳເປັນທາງການແພດ ທີ່ສະໜອງໃຫ້ໂດຍໂຮງໝໍ Providence ໃນ Washington (ຍົກເວັ້ນການທົດລອງ, ການກວດສອບ ຫຼື ການດູແລແບບເລືອກໄດ້). ລາຍຊື່ ແລະ ການອະທິບາຍເພີ່ມເຕີມຂອງໂຮງໝໍ Providence ແລະ ສະຖານທີ່ຕ່າງໆທີ່ກ່ຽວຂ້ອງ ທີ່ໄດ້ຮັບການຄຸ້ມຄອງໂດຍນະໂຍບາຍສະບັບນີ້ ແມ່ນສາມາດຊອກເບິ່ງໄດ້ໃນພາກຊ້ອນທ້າຍ A ລາຍຊື່ສະຖານທີ່ທີ່ໄດ້ຮັບການຄຸ້ມຄອງ. ເມື່ອພວກເຮົາໃຊ້ຄຳສັບ “ໂຮງໝໍ” ໃນນະໂຍບາຍນີ້, ມັນໝາຍເຖິງຂອບເຂດຂອງສະຖານທີ່ຕ່າງໆ ຕາມທີ່ໄດ້ລະບຸໃນພາກຊ້ອນທ້າຍ A.

ນະໂຍບາຍສະບັບນີ້ຈະຖືກຕີຄວາມໝາຍໃນລັກສະນະທີ່ສອດຄ່ອງກັບພາກສ່ວນ 501(r) ຂອງປະມວນກົດໝາຍລາຍໄດ້ພາຍໃນ (Internal Revenue Code) ສະບັບປີ 1986 ຕາມການແກ້ໄຂ ແລະ ໝວດ 70.170.060 ຂອງປະມວນກົດໝາຍ Washington Code ສະບັບປັບປຸງ ຕາມການແກ້ໄຂ. ໃນກໍລະນີມີຄວາມຂັດແຍ່ງລະຫວ່າງຂໍ້ບັນຍັດຂອງກົດໝາຍດັ່ງກ່າວ ແລະ ນະໂຍບາຍສະບັບນີ້, ກົດໝາຍດັ່ງກ່າວຈະມີຜົນຄວບຄຸມ.

**ຈຸດປະສົງ:**

ຈຸດປະສົງຂອງນະໂຍບາຍສະບັບນີ້ ແມ່ນເພື່ອຮັບປະກັນວິທີການທີ່ເປັນທຳ, ບໍ່ເລືອກປະຕິບັດ, ມີປະສິດທິພາບ ແລະ ເປັນເອກະພາບ ສຳລັບການສະໜອງການຊ່ວຍເຫຼືອດ້ານການເງິນ (ການດູແລປິ່ນປົວເພື່ອການກຸສົນ) ໃຫ້ແກ່ບຸກຄົນທີ່ມີສິດ ທີ່ບໍ່ສາມາດຈ່າຍຄ່າບໍລິການທັງໝົດ ຫຼື ບາງສ່ວນ ສຳລັບການບໍລິການສຸກເສີນທີ່ຈຳເປັນທາງການແພດ ແລະ ການບໍລິການອື່ນໆຂອງໂຮງໝໍ ທີ່ສະໜອງໃຫ້ໂດຍໂຮງໝໍ Providence.

ມັນແມ່ນຈຸດປະສົງຂອງນະໂຍບາຍສະບັບນີ້ ທີ່ຈະປະຕິບັດຕາມກົດໝາຍຂອງລັດຖະບານກາງ, ລັດ ແລະ ທ້ອງຖິ່ນ. ນະໂຍບາຍສະບັບນີ້ ແລະ ໂຄງການຊ່ວຍເຫຼືອດ້ານການເງິນ ແມ່ນໄດ້ລວມເອົານະໂຍບາຍຊ່ວຍເຫຼືອດ້ານການເງິນ (Financial Assistance Policy, FAP) ທີ່ເປັນທາງການ ແລະ ນະໂຍບາຍດູແລປິ່ນປົວທາງການແພດຕໍ່ເຫດການສຸກເສີນ (Emergency Medical Care Policy) ສຳລັບແຕ່ລະໂຮງໝໍທີ່ Providence ເປັນເຈົ້າຂອງ, ໄດ້ປ່ອຍໃຫ້ເຊົ່າ ຫຼື ບໍລິຫານ.

**ຜູ້ຮັບຜິດຊອບ:**
ພະນັກງານຮອບວຽນລາຍໄດ້ (Revenue Cycle) ນອກຈາກນັ້ນ, ພະນັກງານທຸກຄົນທີ່ເໝາະສົມ ທີ່ປະຕິບັດໜ້າວຽກ ທີ່ກ່ຽວຂ້ອງກັບການລົງທະບຽນ, ການຮັບຄົນເຈັບ, ທີ່ປຶກສາດ້ານການເງິນ ແລະ ຝ່າຍຊ່ວຍເຫຼືອລູກຄ້າ ຈະໄດ້ຮັບການຝຶກອົບຮົມປົກກະຕິກ່ຽວກັບນະໂຍບາຍສະບັບນີ້.

**ນະໂຍບາຍ:**
Providence ຈະໃຫ້ການບໍລິການໂຮງໝໍ ທີ່ບໍ່ມີຄ່າໃຊ້ຈ່າຍ ຫຼື ທີ່ມີສ່ວນຫຼຸດ ໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດ ທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ແລະ ມີປະກັນໄພບໍ່ເຖິງ ທີ່ມີ FPL ທີ່ ຫຼື ຕໍ່າກວ່າ 400% ເມື່ອຄວາມສາມາດໃນການຈ່າຍຄ່າບໍລິການ ແມ່ນເປັນອຸປະສັກໃນການເຂົ້າເຖິງການດູແລປິ່ນປົວເຫດການສຸກເສີນທີ່ຈຳເປັນທາງການແພດ ແລະ ການດູແລປິ່ນປົວອື່ນໆຂອງໂຮງໝໍ ແລະ ບໍ່ໄດ້ມີການກຳນົດແຫຼ່ງການຄຸ້ມຄອງທີ່ເປັນທາງເລືອກ. ຄົນເຈັບຕ້ອງມີເງື່ອນໄຂການມີສິດຕາມທີ່ລະບຸໄວ້ໃນນະໂຍບາຍສະບັບນີ້ເພື່ອມີຄຸນສົມບັດຜ່ານ.

ໂຮງໝໍ Providence ທີ່ມີພະແນກສຸກເສີນສະເພາະ ຈະໃຫ້ການດູແລປິ່ນປົວອາການສຸກເສີນທາງການແພດໂດຍບໍ່ມີການເລືອກປະຕິບັດ (ພາຍໃນຄວາມໝາຍຂອງກົດໝາຍວ່າດ້ວຍການປິ່ນປົວທາງການແພດສຸກເສີນ ແລະ ແຮງງານ ແລະ ໝວດ 246-453-010 ຂອງປະມວນກົດໝາຍການບໍລິຫານຂອງ Washington) ທີ່ສອດຄ່ອງກັບຂີດຄວາມສາມາດທີ່ມີຢູ່ ໂດຍບໍ່ຄຳນຶງວ່າ ຄົນເຈັບມີສິດຮັບການຊ່ວຍເຫຼືອດ້ານການເງິນ ຫຼື ບໍ່. Providence ຈະບໍ່ເລືອກປະຕິບັດບົນພື້ນຖານອາຍຸ, ເຊື້ອຊາດ, ສີຜິວ, ຄວາມເຊື່ອ, ຊົນເຜົ່າ, ສາສະໜາ, ຊາດກຳເນີດ, ສະຖານະການແຕ່ງດອງ, ຄວາມມັກທາງເພດ, ເອກະລັກ ຫຼື ການສະແດງອອກທາງເພດ, ຄວາມພິການ, ນັກຮົບເກົ່າ ຫຼື ສະຖານະທາງການທະຫານ ຫຼື ພື້ນຖານອື່ນໆ ທີ່ຫ້າມໂດຍກົດໝາຍຂອງລັດຖະບານກາງ, ລັດ ຫຼື ທ້ອງຖິ່ນ ໃນເວລາກຳນົດການຊ່ວຍເຫຼືອດ້ານການເງິນ.

ໂຮງໝໍ Providence ພ້ອມກັບພະແນກສຸກເສີນ ຈະເຮັດການກວດຄັດກອງທາງການແພດສຸກເສີນ ແລະ ການປິ່ນປົວເພື່ອຄວາມຄົງໂຕ ຫຼື ສົ່ງຕໍ່ ແລະ ໂອນຄົນເຈັບ ຖ້າການໂອນດັ່ງກ່າວມີຄວາມເໝາະສົມຕາມ 42 C.F.R 482.55 ແລະ RCW § 70.170.060. Providence ຫ້າມບໍ່ໃຫ້ມີການດຳເນີນການ, ການຮັບເອົາຄົນເຈັບ ຫຼື

ນະໂຍບາຍທີ່ຈະບໍ່ສົ່ງເສີມຄົນເຈັບຈາກການດູແລປິ່ນປົວທາງການແພດສຸກເສີນເຊັ່ນ: ການອະນຸຍາດໃຫ້ມີການຮຽກເກັບໜີ້ ທີ່ຈະແຊກແຊງກັບການໃຫ້ບໍລິການດູແລປິ່ນປົວທາງການແພດສຸກເສີນ.

<u>**ລາຍຊື່ຜູ້ຊ່ຽວຊານທີ່ຂຶ້ນກັບ Providence FAP:**</u> ໂຮງໝໍ Providence ແຕ່ລະແຫ່ງຈະກຳນົດລາຍຊື່ແພດ, ກຸ່ມການແພດ ຫຼື ຜູ້ຊ່ຽວຊານອື່ນໆທີ່ໃຫ້ບໍລິການຜູ້ທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບການຄຸ້ມຄອງຈາກນະໂຍບາຍສະບັບນີ້. ໂຮງໝໍ Providence ແຕ່ລະແຫ່ງຈະສະໜອງລາຍຊື່ນີ້ໃຫ້ແກ່ຄົນເຈັບທີ່ຂໍສຳເນົາ. ນອກຈາກນັ້ນ, ລາຍຊື່ຜູ້ໃຫ້ບໍລິການແມ່ນສາມາດຊອກຫາໄດ້ທາງອອນລາຍທີ່ເວັບໄຊຂອງ Providence: www.providence.org/obp.

<u>**ເງື່ອນໄຂການມີສິດຮັບການຊ່ວຍເຫຼືອດ້ານການເງິນ**</u>

ການຊ່ວຍເຫຼືອດ້ານການເງິນແມ່ນມີໃຫ້ຄົນເຈັບທີ່ບໍ່ມີປະກັນໄພ ແລະ ທີ່ມີປະກັນໄພ ແລະ ຜູ້ຄ້ຳປະກັນ ເຊິ່ງການຊ່ວຍເຫຼືອດັ່ງກ່າວແມ່ນສອດຄ່ອງກັບນະໂຍບາຍສະບັບນີ້ ແລະ ກົດໝາຍຂອງລັດຖະບານກາງ ແລະ ລັດ ທີ່ຄຸ້ມຄອງສະຫວັດດີການທີ່ອະນຸຍາດໃຫ້ໄດ້ຂອງຄົນເຈັບ. ໂຮງໝໍ Providence ຈະໃຊ້ຄວາມພະຍາຍາມຢ່າງເໝາະສົມ ເພື່ອກຳນົດການຄຸ້ມຄອງພາກສ່ວນທີສາມ ທີ່ມີຢູ່ ຫຼື ທີ່ບໍ່ມີຢູ່ ທີ່ອາດຈະມີໃຫ້ທັງໝົດ ຫຼື ບາງສ່ວນ ຫຼື ສະຖານະການອຸປະຖຳການດູແລປິ່ນປົວເພື່ອການກຸສົນ ສຳລັບການປິ່ນປົວດູແລໂດຍໂຮງໝໍ Providence ກ່ອນຈະມອບໃຫ້ມີການເກັບເງິນກັບຄົນເຈັບ.

ເມື່ອຄົນເຈັບ ຫຼື ຜູ້ຄ້ຳປະກັນຂອງເຂົາເຈົ້າສາມາດມີສິດ ສຳລັບການຄຸ້ມຄອງຜ່ານໂຄງການຊ່ວຍເຫຼືອທາງການແພດພາຍໃຕ້ໝວດ 74.09 RCW ຫຼື ການແລກປ່ຽນສະຫວັດດີການສຸຂະພາບຂອງ Washington ຫຼື ທີ່ຖືກກຳນົດວ່າມີຄຸນສົມບັດສຳລັບການຄຸ້ມຄອງດູແລສຸຂະພາບ ທີ່ມີຜົນຍ້ອນຫຼັງ ຜ່ານໂຄງການຊ່ວຍເຫຼືອດ້ານການເງິນພາຍໃຕ້ໝວດ 74.09 RCW, ໂຮງໝໍ Providence ຈະໃຫ້ການຊ່ວຍເຫຼືອແກ່ຄົນເຈັບ ຫຼື ຜູ້ຄ້ຳປະກັນ ທີ່ສະໝັກຂໍການຄຸ້ມຄອງດັ່ງກ່າວ. ການຊ່ວຍເຫຼືອດ້ານການເງິນອາດຈະຖືກປະຕິເສດ ຖ້າຄົນເຈັບ ຫຼື ຜູ້ຄ້ຳປະກັນຂອງເຂົາເຈົ້າບໍ່ສາມາດໃຊ້ຄວາມພະຍາຍາມທີ່ເໝາະສົມ ໃນການຮ່ວມມື ແລະ ຊ່ວຍເຫຼືອໂຮງໝໍ Providence ໃນການສະໝັກຂໍການຄຸ້ມຄອງດັ່ງກ່າວ. ໂຮງໝໍ Providence ຈະບໍ່ມອບພາລະທີ່ບໍ່ສົມເຫດສົມຜົນໃຫ້ແກ່ຄົນເຈັບ ຫຼື ຜູ້ຄ້ຳປະກັນໃນລະຫວ່າງຂັ້ນຕອນການສະໝັກຂໍຄວາມຊ່ວຍເຫຼືອດ້ານການເງິນ ແລະ ການຄຸ້ມຄອງທີ່ມີຜົນຍ້ອນຫຼັງ, ໂດຍພິຈາລະນາເຖິງຄວາມບົກຜ່ອງທາງຮ່າງກາຍ, ຈິດ, ສະຕິປັນຍາ ຫຼື ການສຳຜັດ ຫຼື ອຸປະສັກທາງພາສາ ທີ່ອາດຈະຂັດຂວາງຂີດຄວາມສາມາດຂອງພາກສ່ວນທີ່ຮັບຜິດຊອບ ໃນການປະຕິບັດຕາມຂະບວນການການສະໝັກ. ຄົນເຈັບ ທີ່ບໍ່ມີສິດຢ່າງແນ່ນອນ ຫຼື ເປັນບາງໝວດ ຫຼື ທີ່ຖືກຖືວ່າ ບໍ່ມີສິດໃນ 12 ເດືອນກ່ອນໜ້ານັ້ນ ສຳລັບໂຄງການຂອງລັດ ຫຼື ລັດຖະບານກາງ ຈະບໍ່ຈຳເປັນຕ້ອງສະໝັກຂໍໂຄງການດັ່ງກ່າວ ເພື່ອຮັບການຊ່ວຍເຫຼືອທາງການເງິນ.

ຄົນເຈັບທີ່ບໍ່ມີປະກັນໄພອາດຈະໄດ້ຮັບສ່ວນຫຼຸດທີ່ບໍ່ມີປະກັນໄພ
ກ່ອນຈະມີການຢັ້ງຢືນການມີສິດຮັບການຊ່ວຍເຫຼືອດ້ານການເງິນ.
ຍອດການຊ່ວຍເຫຼືອດ້ານການເງິນທີ່ມີສິດ ແມ່ນລວມທັງ ແຕ່ບໍ່ຈຳກັດພຽງແຕ່ສິ່ງຕໍ່ໄປນີ້:
ຄົນເຈັບທີ່ບໍ່ມີປະກັນໄພ ຫຼື ທີ່ຈ່າຍດ້ວຍຕົວເອງ, ຄ່າທຳນຽມສຳລັບຄົນເຈັບທີ່ບໍ່ມີປະກັນໄພ
ທີ່ມີການຄຸ້ມຄອງຈາກນິຕິບຸກຄົນ ທີ່ບໍ່ມີສາຍພົວພັນທາງສັນຍາ, ປະກັນໄພຮ່ວມ,
ເງິນຮັບຜິດຊອບສ່ວນທຳອິດ ແລະ ຈຳນວນຈ່າຍຮ່ວມ ທີ່ກ່ຽວຂ້ອງກັບຄົນເຈັບທີ່ບໍ່ມີປະກັນໄພ.
ຈຳນວນເງິນຮັບຜິດຊອບສ່ວນທຳອິດ ແລະ ປະກັນໄພຮ່ວມທີ່ຮຽກຮັບເປັນໜີ້ບໍ່ດີຂອງ Medicare
ຈະຖືກຍົກເວັ້ນອອກຈາກການລາຍງານກ່ຽວກັບການດູແລປິ່ນປົວເພື່ອການກຸສົນ.

ຄົນເຈັບທີ່ກຳລັງຂໍການຊ່ວຍເຫຼືອດ້ານການເງິນຕ້ອງປະກອບຄຳຮ້ອງຂໍການຊ່ວຍເຫຼືອດ້ານການເງິນຈາ
ກ Providence ໃຫ້ສຳເລັດ ແລະ ການມີສິດແມ່ນຈະອີງຕາມຄວາມຕ້ອງການດ້ານການເງິນ
ໃນວັນທີຂອງການໃຫ້ບໍລິການ ຫຼື ໃນວັນທີຂອງການສະໝັກຂໍ ແລ້ວແຕ່ວ່າ
ອັນໃດຈະລະບຸຈຳນວນລາຍໄດ້ທີ່ຕ່ຳກວ່າ ແລະ ອັນໃດທີ່ມີຄວາມຕ້ອງການດ້ານການເງິນຫຼາຍສຸດ.
ຄົນເຈັບສາມາດສະໝັກຂໍການຊ່ວຍເຫຼືອໄດ້ໃໝ່
ຖ້າສະຖານະການດ້ານການເງິນຂອງເຂົາເຈົ້າມີການປ່ຽນແປງ
ຖ້າຫາກວ່າການສະໝັກຂໍກ່ອນໜ້ານັ້ນຖືກປະຕິເສດ ຫຼື ໄດ້ຮັບການອະນຸມັດບາງສ່ວນ.
ຈະມີການໃຊ້ຄວາມພະຍາຍາມທີ່ເໝາະສົມ ເພື່ອແຈ້ງ ແລະ ຮຽນໃຫ້ຄົນເຈັບຮັບຊາບ
ກ່ຽວກັບການມີການຊ່ວຍເຫຼືອດ້ານການເງິນ ໂດຍການສະໜອງຂໍ້ມູນໃຫ້ໃນລະຫວ່າງການຮັບເຂົ້າ ແລະ
ການອະນຸຍາດໃຫ້ອອກຈາກໂຮງໝໍ ເຊິ່ງຈະແຈ້ງໃນການສື່ສານທີ່ເປັນລາຍລັກອັກສອນ
ທີ່ກ່ຽວກັບການຮຽກເກັບເງິນ ຫຼື ການເກັບເງິນ, ໃນໃບຮຽກເກັບເງິນ ຫຼື
ເຂດບໍລິການດ້ານການເງິນທີ່ຄົນເຈັບສາມາດເຂົ້າເຖິງໄດ້, ລວມທັງໃນບ້າຍຢູ່ເຂດຄົນເຈັບນອກ ແລະ
ຄົນເຈັບໃນ, ລວມທັງເຂດທີ່ຄົນເຈັບຖືກຮັບໂຮງໝໍ ຫຼື ລົງທະບຽນ ແລະ ໃນພະແນກສຸກເສີນ.
ການບໍລິການແປພາສາ ແມ່ນຈະມີໃຫ້ໃນພາສາທີ່ປະຊາກອນຫຼາຍກວ່າສິບເປີເຊັນໃຊ້ກັນ
ໃນເຂດບໍລິການຂອງໂຮງໝໍ. Providence
ຈະຮັກສາຂໍ້ມູນທີ່ໃຊ້ໃນການກຳນົດການມີສິດຕາມຫຼັກການປະຕິບັດດ້ານການບັນທຶກຂອງຕົນ.

**<u>ການສະໝັກຂໍການຊ່ວຍເຫຼືອດ້ານການເງິນ:</u>** ຄົນເຈັບ ຫຼື ຜູ້ຄ້ຳປະກັນສາມາດສະເໜີຂໍ ແລະ
ຍື່ນຄຳຮ້ອງຂໍການຊ່ວຍເຫຼືອດ້ານການເງິນ ທີ່ບໍ່ມີຄ່າໃຊ້ຈ່າຍ ແລະ ມີໃຫ້ທີ່ຫ້ອງການຂອງ Providence ຫຼື
ດ້ວຍວິທີການຕໍ່ໄປນີ້: ການແນະນຳຄົນເຈັບ ແລະ ພະນັກງານບໍລິການດ້ານການເງິນໃນຕອນ ຫຼື
ກ່ອນອອກຈາກໂຮງໝໍວ່າ ໄດ້ມີການສະເໜີຂໍການຊ່ວຍເຫຼືອ ແລະ
ໄດ້ມີການຍື່ນເອກະສານທີ່ປະກອບສຳເລັດແລ້ວ; ທາງໄປສະນີ ຫຼື ໂດຍການເຂົ້າເບິ່ງ
www.providence.org/obp, ການດາວໂຫຼດ ແລະ ການສົ່ງຄຳຮ້ອງທີ່ປະກອບສຳເລັດພ້ອມກັບເອກະສານ.
ບຸກຄົນທີ່ສະໝັກຂໍການຊ່ວຍເຫຼືອດ້ານການເງິນ ຈະໄດ້ຮັບການຄັດກອງເບື້ອງຕົ້ນ
ເຊິ່ງຈະລວມເຖິງການກວດເບິ່ງວ່າ ຄົນເຈັບໄດ້ໃຊ້ເງິນຈົນໝົດບໍ່ ຫຼື ບໍ່ມີສິດຮັບເງິນຈາກພາກສ່ວນທີສາມ
ແລະ ເຂົາເຈົ້າມີເກນເງື່ອນໄຂສຳລັບການດູແລປິ່ນປົວເພື່ອການກຸສົນ ຫຼື ບໍ່.

ໂຮງໝໍ Providence ແຕ່ລະແຫ່ງ ຈະມອບໝາຍບຸກຄະລາກອນທີ່ຖືກແຕ່ງຕັ້ງ ໃຫ້ຊ່ວຍເຫຼືອຄົນເຈັບໃນການປະກອບຄໍາຮ້ອງຂໍການຊ່ວຍເຫຼືອດ້ານການເງິນໃຫ້ສໍາເລັດ ແລະ ໃນການກໍານົດການມີສິດສໍາລັບການຊ່ວຍເຫຼືອດ້ານການເງິນຈາກ Providence ຫຼື ການຊ່ວຍເຫຼືອດ້ານການເງິນຈາກໂຄງການປະກັນໄພທີ່ໄດ້ຮັບທຶນຈາກລັດຖະບານ, ຖ້າຫາກວ່າກ່ຽວຂ້ອງ. ຈະມີການບໍລິການລ່າມແປພາສາໃຫ້ ເພື່ອຕອບຄໍາຖາມ ຫຼື ຄວາມກັງວົນ ແລະ ເພື່ອຊ່ວຍໃນການປະກອບຄໍາຮ້ອງຂໍການຊ່ວຍເຫຼືອດ້ານການເງິນໃຫ້ສໍາເລັດ.

ຄົນເຈັບ ຫຼື ຜູ້ຄໍ້າປະກັນ ທີ່ອາດຈະມີສິດສະໝັກຂໍການຊ່ວຍເຫຼືອດ້ານການເງິນ ອາດຈະສະໜອງເອກະສານທີ່ພຽງພໍໄດ້ທຸກເວລາໃຫ້ແກ່ Providence ເພື່ອສະໜັບສະໜູນການຕັດສິນການມີສິດ ເມື່ອຮູ້ວ່າ ລາຍໄດ້ຂອງເຂົາເຈົ້າຢູ່ຕໍ່າກວ່າລະດັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Level, FPL) ຕາມລະບຽບການທີ່ກ່ຽວຂ້ອງຂອງລັດຖະບານກາງ ແລະ ລັດ. Providence ຈະລະງັບກິດຈະກໍາການເກັບເງິນ ໃນຊ່ວງລໍຖ້າຄໍາຕັດສິນການມີສິດໃນເບື້ອງຕົ້ນ ສໍາລັບການຊ່ວຍເຫຼືອດ້ານການເງິນ, ຖ້າຫາກວ່າ ຄົນເຈັບ ຫຼື ຜູ້ຄໍ້າປະກັນຂອງເຂົາເຈົ້າໃຫ້ຄວາມຮ່ວມມືແກ່ຄວາມພະຍາຍາມຂອງ Providence ຢ່າງເໝາະສົມ ເພື່ອໃຫ້ໄດ້ຄໍາຕັດສິນໃນເບື້ອງຕົ້ນ.

Providence ຮັບຮູ້ວ່າ ຄໍາຕັດສິນການມີສິດຮັບການຊ່ວຍເຫຼືອດ້ານການເງິນ ຫຼື ສ່ວນຫຼຸດ ແມ່ນສາມາດເກີດຂຶ້ນໄດ້ທຸກເວລາ ເມື່ອຮູ້ວ່າ ລາຍໄດ້ຂອງຜູ້ສະໝັກຂໍແມ່ນຕໍ່າກວ່າ 400% ຂອງມາດຕະຖານຄວາມທຸກຍາກຂອງລັດຖະບານກາງ ໂດຍປັບໃຫ້ເຂົ້າກັບຂະໜາດຂອງຄອບຄົວ. ນອກຈາກນັ້ນ, Providence ສາມາດເລືອກທີ່ຈະອະນຸຍາດໃຫ້ມີການຊ່ວຍເຫຼືອດ້ານການເງິນ ໂດຍພຽງແຕ່ອີງໃສ່ຄໍາຕັດສິນເບື້ອງຕົ້ນ ກ່ຽວກັບສະຖານະຂອງຄົນເຈັບ ວ່າເປັນບຸກຄົນທຸກຍາກ. ໃນກໍລະນີເຫຼົ່ານີ້ແມ່ນອາດຈະບໍ່ຈໍາເປັນຕ້ອງມີເອກະສານ.

<u>**ສະຖານະການດ້ານການເງິນຂອງບຸກຄົນ:**</u> ລາຍໄດ້, ຊັບສິນບາງອັນ ແລະ ລາຍຈ່າຍຂອງຄົນເຈັບ ແມ່ນຈະຖືກນໍາໃຊ້ໃນການປະເມີນສະຖານະການດ້ານການເງິນຂອງບຸກຄົນຂອງຄົນເຈັບ. Providence ຈະພິຈາລະນາ ແລະ ເກັບກໍາຂໍ້ມູນທີ່ກ່ຽວຂ້ອງກັບຊັບສິນ ຕາມທີ່ກໍານົດໂດຍສູນເພື່ອການບໍລິການ Medicare ແລະ Medicaid (Centers for Medicare and Medicaid Services, CMS) ສໍາລັບການລາຍງານຄ່າໃຊ້ຈ່າຍ Medicare.
ຊັບສິນທີ່ຖືກພິຈາລະນາໃນຕອນເຮັດການຕັດສິນການມີສິດສໍາລັບການຊ່ວຍເຫຼືອດ້ານການເງິນຈະບໍ່ປະກອບມີ: (A) ສໍາລັບບຸກຄົນທີ່ໂສດ ແມ່ນຊັບສິນທີ່ເປັນເງິນ $100,000 ທໍາອິດຂອງຄົນເຈັບ ແລະ 50% ຂອງຊັບສິນທີ່ເປັນເງິນຂອງຄົນເຈັບແມ່ນຫຼາຍກວ່າ $100,000 ທໍາອິດ; (B) ສໍາລັບຄອບຄົວທີ່ມີສອງຄົນຂຶ້ນໄປ ແມ່ນຊັບສິນທີ່ເປັນເງິນ $100,000 ທໍາອິດຂອງຄອບຄົວ ແລະ 50% ຂອງຊັບສິນທີ່ເປັນເງິນຂອງຄອບຄົວແມ່ນຫຼາຍກວ່າ $100,000 ທໍາອິດ; (C) ກໍາມະສິດໃນທີ່ຢູ່ອາໄສຫຼັກ; (D) ເງິນບໍານານ ຫຼື ແຜນການຊົດເຊີຍໄລຍະຍາວທີ່ຜ່ານເກນພາຍໃຕ້ປະມວນກົດໝາຍລາຍໄດ້ລາຍໃນ ຫຼື ແຜນການຊົດເຊີຍທີ່ບໍ່ແມ່ນໄລຍະຍາວທີ່ບໍ່ຜ່ານເກນ; (E) ຍານພາຫະນະໜຶ່ງຄັນ ແລະ ຍານພາຫະນະທີສອງ ຖ້າຈໍາເປັນສໍາລັບຈຸດປະສົງໃນການເຮັດວຽກ ຫຼື ທາງການແພດ; (F) ສັນຍາຝັງສົບທີ່ຈ່າຍລ່ວງໜ້າແລ້ວ ຫຼື ບ່ອນຝັງສົບ; ແລະ (G) ນະໂຍບາຍປະກັນໄພຊີວິດໃດໜຶ່ງ ທີ່ມີມູນຄ່າ $100,000 ລົງໄປ. ມູນຄ່າຂອງຊັບສິນທີ່ມີການປັບໄໝສໍາລັບການຖອນກ່ອນກໍານົດ

ຈະເປັນມູນຄ່າຂອງຊັບສິນຫຼັງການຈ່າຍຄ່າປັບໃໝ. ການສະເໜີຂໍ້ມູນຈາກ Providence ກັບພາກສ່ວນທີ່ຮັບຜິດຊອບ ເພື່ອຢັ້ງຢືນຊັບສິນ ແມ່ນຈະຖືກຈຳກັດກັບສິ່ງທີ່ຈຳເປັນຢ່າງເໝາະສົມ ແລະ ທີ່ມີຄວາມພ້ອມໃນການກຳນົດການມີຕົວຕົນ, ການມີຢູ່ ແລະ ມູນຄ່າຂອງຊັບສິນຂອງບຸກຄົນ ແລະ ຈະບໍ່ຖືກນຳໃຊ້ ເພື່ອບໍ່ສົ່ງເສີມການສະໝັກຂໍການດູແລປິ່ນປົວທີ່ບໍ່ເສຍຄ່າໃຊ້ຈ່າຍ ຫຼື ທີ່ມີສ່ວນຫຼຸດ. ແບບຟອມການຢັ້ງຢືນທີ່ຊ້ຳກັນຈະບໍ່ຖືກຮ້ອງຂໍ.
ລາຍງານບັນຊີກະແສລາບວັນດຽວແມ່ນຈຳເປັນໃນການຢັ້ງຢືນຊັບສິນທີ່ເປັນເງິນ. ຖ້າບໍ່ມີເອກະສານ, Providence ຈະອີງໃສ່ຄຳຖະແຫຼງທີ່ເປັນລາຍລັກອັກສອນ ແລະ ທີ່ລົງລາຍເຊັນຈາກພາກສ່ວນທີ່ກ່ຽວຂ້ອງ. ຂໍ້ມູນຊັບສິນໃດໜຶ່ງ ທີ່ໂຮງໝໍໄດ້ຮັບໃນການປະເມີນຜົນຄົນເຈັບ ສຳລັບການດູແລປິ່ນປົວເພື່ອການກຸສົນ ຈະບໍ່ຖືກນຳໃຊ້ສຳລັບການເກັບເງິນ ແລະ ຊັບສິນຈະບໍ່ຖືກພິຈາລະນາສຳລັບຄົວເຮືອນ ທີ່ມີລະດັບຄວາມທຸກຍາກຂອງລັດຖະບານກາງຕ່ຳກວ່າ 300%.

<u>**ຄຸນສົມບັດດ້ານລາຍໄດ້:**</u> ເກນລາຍໄດ້ ໂດຍອີງຕາມ FPL ຈະຖືກນຳໃຊ້ ເພື່ອຕັດສິນການມີສິດ ສຳລັບການດູແລປິ່ນປົວທີ່ບໍ່ມີຄ່າໃຊ້ຈ່າຍ ຫຼື ທີ່ມີສ່ວນຫຼຸດ. ກະລຸນາເບິ່ງພາກຊ້ອນທ້າຍ B ສຳລັບລາຍລະອຽດ.

<u>**ການຕັດສິນ ແລະ ການອະນຸມັດ:**</u> ຄົນເຈັບຈະໄດ້ຮັບການແຈ້ງເຕືອນກ່ຽວກັບການຕັດສິນການມີສິດ FAP ພາຍໃນ 14 ມື້ຫຼັງການສົ່ງຄຳຮ້ອງຂໍການຊ່ວຍເຫຼືອດ້ານການເງິນທີ່ປະກອບສຳເລັດ ແລະ ເອກະສານທີ່ຈຳເປັນ.
ການຕັດສິນການມີສິດຈະປະກອບມີຄຳອະທິບາຍກ່ຽວກັບພື້ນຖານໃນການປະຕິເສດ.
ເມື່ອໄດ້ຮັບຄຳຮ້ອງ, ການເກັບເງິນຈະຖືກຊະລໍໄປກ່ອນ ຈົນກວ່າການຕັດສິນການມີສິດ ທີ່ເປັນລາຍລັກອັກສອນຈະຖືກສົ່ງໃຫ້ຄົນເຈັບ.
ໂຮງໝໍຈະບໍ່ເຮັດການຕັດສິນການມີສິດສຳລັບການຊ່ວຍເຫຼືອ ໂດຍອີງໃສ່ຂໍ້ມູນ ທີ່ໂຮງໝໍຄິດວ່າບໍ່ຖືກຕ້ອງ ຫຼື ເຊື່ອຖືບໍ່ໄດ້.

<u>**ການແກ້ໄຂຂໍ້ຂັດແຍ່ງ:**</u>
ຄົນເຈັບສາມາດອຸທອນການຕັດສິນການມີສິດສຳລັບການຊ່ວຍເຫຼືອດ້ານການເງິນ.ໂດຍການສະໜອງເອກະສານເພີ່ມເຕີມທີ່ກ່ຽວຂ້ອງໃຫ້ແກ່ໂຮງໝໍພາຍໃນ 30 ວັນຫຼັງຈາກໄດ້ຮັບແຈ້ງການປະຕິເສດ. ຄົນເຈັບອາດຈະຕ້ອງສະໜອງເອກະສານເພີ່ມເຕີມທີ່ກ່ຽວຂ້ອງໃນການສະໜັບສະໜູນການອຸທອນຂອງເຂົາເຈົ້າ. Providence ຈະລະງັບການເກັບເງິນ ໂດຍລໍຖ້າການກວດສອບການອຸທອນ. ທຸກການອຸທອນຈະຖືກກວດສອບ ແລະ ຖ້າການກວດສອບຢືນຢັນການປະຕິເສດ, ແຈ້ງການທີ່ເປັນລາຍລັກອັກສອນຈະຖືກສົ່ງໃຫ້ຜູ້ຄ້ຳປະກັນ ແລະ ພະແນກສາທາລະນະສຸກຂອງລັດ ເມື່ອຈຳເປັນ ແລະ ຕາມກົດໝາຍ. ຂັ້ນຕອນການອຸທອນສຸດທ້າຍຈະສະຫຼຸບພາຍໃນ 10 ວັນຫຼັງຈາກໂຮງໝໍໄດ້ປະຕິເສດ. ການອຸທອນແມ່ນສາມາດສົ່ງໄປທີ່ Providence Regional Business Office, P.O. Box 3268, Portland, OR 97208-3395

**ການກຸສົນແບບສົມມຸດຖານ:** Providence ອາດຈະອະນຸມັດຄົນເຈັບສຳລັບການປັບການກຸສົນຕໍ່ຍອດບັນຊີຂອງເຂົາເຈົ້າດ້ວຍວິທີການທີ່ບໍ່ແມ່ນຄຳຮ້ອງການຊ່ວຍເຫຼືອດ້ານການເງິນສະບັບເຕັມ. ການຕັດສິນດັ່ງກ່າວຈະມີຂຶ້ນບົນພື້ນຖານສົມມຸດຖານ ໂດຍນຳໃຊ້ເຄື່ອງມືປະເມີນຜົນດ້ານການເງິນທີ່ເປັນທີ່ຍອມຮັບໃນອຸດສາຫະກຳ ທີ່ປະເມີນຄວາມສາມາດໃນການຈ່າຍ ໂດຍອີງໃສ່ບັນທຶກທາງການເງິນທີ່ມີຢູ່ໃນສາທາລະນະ ຫຼື ບັນທຶກອື່ນໆ ເຊິ່ງລວມທັງ ແຕ່ບໍ່ຈຳກັດພຽງແຕ່ລາຍໄດ້ຂອງຄົວເຮືອນ, ຂະໜາດຂອງຄົວເຮືອນ ແລະ ໜີ້ສິນ ແລະ ປະຫວັດການຈ່າຍເງິນ.

**<u>ສະຖານະການພິເສດອື່ນໆ</u>:** ຄົນເຈັບທີ່ມີສິດສຳລັບໂຄງການ FPL ເຊັ່ນ: Medicaid ແລະ ໂຄງການຊ່ວຍເຫຼືອຜູ້ທີ່ມີລາຍໄດ້ຕ່ຳທີ່ອຸປະຖຳໂດຍລັດຖະບານ ອາດຈະຍັງມີສິດສຳລັບການຊ່ວຍເຫຼືອດ້ານການເງິນ. ຍອດເງິນໃນບັນຊີຂອງຄົນເຈັບ ເຊິ່ງເປັນຜົນມາຈາກການຮຽກເກັບຄ່າບໍລິການທີ່ບໍ່ສາມາດເບີກຄືນໄດ້ຈາກ Medicaid ແລະ ໂຄງການຊ່ວຍເຫຼືອຜູ້ທີ່ມີລາຍໄດ້ຕ່ຳທີ່ອຸປະຖຳໂດຍລັດຖະບານ ອາດຈະມີສິດການກຸສົນສຳລັບການລຶບບັນຊີເປັນໜີ້ສູນທັງໝົດ ຫຼື ບາງສ່ວນ, ເຊິ່ງລວມທັງ ແຕ່ບໍ່ຈຳກັດພຽງແຕ່ຄ່າບໍລິການທີ່ບໍ່ສາມາດເບີກຄືນໄດ້ ສຳລັບການບໍລິການທີ່ຈຳເປັນທາງການແພດ ທີ່ກ່ຽວຂ້ອງກັບສິ່ງຕໍ່ໄປນີ້:

- ການພັກຂອງຄົນເຈັບເຂດໃນທີ່ຖືກປະຕິເສດ
- ຈຳນວນມື້ຮັບການດູແລປິ່ນປົວຂອງຄົນເຈັບເຂດໃນທີ່ຖືກປະຕິເສດ
- ການບໍລິການທີ່ບໍ່ໄດ້ຮັບການຄຸ້ມຄອງ
- ການປະຕິເສດການອະນຸຍາດການປິ່ນປົວກ່ອນໜ້ານັ້ນ
- ການປະຕິເສດເນື່ອງຈາກການຄຸ້ມຄອງທີ່ຖືກຈຳກັດ

**<u>ລາຍຈ່າຍທາງການແພດສຳລັບໄພຮ້າຍແຮງ:</u>** Providence ອາດຈະໃຫ້ການກຸສົນໃນກໍລະນີມີລາຍຈ່າຍທາງການແພດສຳລັບໄພຮ້າຍແຮງ ໂດຍອີງໃສ່ການຕັດສິນໃຈຂອງຕົນ. ຄົນເຈັບເຫຼົ່ານີ້ຈະຖືກຈັດການບົນພື້ນຖານຂອງບຸກຄົນ.

**<u>ເວລາຂອງເຫດການສຸກເສີນ:</u>** ການຊ່ວຍເຫຼືອດ້ານການເງິນອາດຈະມີໃຫ້ຕາມການຕັດສິນໃຈຂອງ Providence ໃນເວລາທີ່ມີເຫດການສຸກເສີນຂອງຊາດ ຫຼື ລັດ ເຊິ່ງປາດສະຈາກການຊ່ວຍເຫຼືອດ້ານລາຍຈ່າຍສຳລັບໄພຮ້າຍແຮງ.

**<u>ການຈຳກັດຄ່າບໍລິການສຳລັບຄົນເຈັບທີ່ມີສິດຮັບການຊ່ວຍເຫຼືອດ້ານການເງິນ:</u>**
ຄົນເຈັບທີ່ມີຄຸນສົມບັດຮັບຄວາມຊ່ວຍເຫຼືອຕາມໝວດທີ່ກ່າວມາຂ້າງເທິງ ຈະບໍ່ມີຄວາມຮັບຜິດຊອບຕໍ່ຄ່າບໍລິການລວມ ທີ່ຫຼາຍກວ່າເປີເຊັນຈຳນວນທີ່ຮຽກເກັບໂດຍທົ່ວໄປ (Amounts Generally Billed, AGB) ຕາມທີ່ກຳນົດລຸ່ມນີ້.

**<u>ແຜນການຈ່າຍເງິນທີ່ເໝາະສົມ:</u>**
ເມື່ອຄົນເຈັບໄດ້ຮັບການອະນຸມັດສຳລັບການຊ່ວຍເຫຼືອດ້ານການເງິນບາງສ່ວນ ແຕ່ຍັງມີຍອດທີ່ຕ້ອງຈ່າຍ, Providence ຈະເຈລະຈາໃຫ້ມີການຈັດແຈງແຜນການຈ່າຍເງິນໃຫ້.
ແຜນການຈ່າຍເງິນທີ່ເໝາະສົມຈະປະກອບມີການຈ່າຍເງິນປະຈຳເດືອນ (ໂດຍບໍ່ມີດອກເບ້ຍ ຫຼື

ຄ່າທຳນຽມການຈ່າຍຊ້າ) ທີ່ບໍ່ຫຼາຍກວ່າ 10 ເປີເຊັນຂອງລາຍໄດ້ຂອງຄົນເຈັບ ຫຼື ລາຍໄດ້ປະຈຳເດືອນຂອງຄອບຄົວ, ຍົກເວັ້ນການຫັກເງິນສຳລັບລາຍຈ່າຍປະຈຳວັນທີ່ຈຳເປັນທີ່ຄົນເຈັບໄດ້ລະບຸໃນຄຳຮ້ອງການຊ່ວຍເຫຼືອດ້ານການເງິນ.

**<u>ການຮຽກເກັບເງິນ ແລະ ການເກັບເງິນ:</u>** ຍອດເງິນທີ່ຍັງຄ້າງຈ່າຍຂອງຄົນເຈັບ ຫຼື ຜູ້ຄ້ຳປະກັນຫຼັງການສະໝັກຂໍສ່ວນຫຼຸດ, ຖ້າຫາກວ່າມີ, ແມ່ນຈະຖືກສົ່ງຕໍ່ໃຫ້ການເກັບເງິນ. ການເກັບເງິນຍອດຄ້າງຈ່າຍຈະຢຸດຕິໃນຂະນະລໍຖ້າການຕັດສິນສຸດທ້າຍກ່ຽວກັບການມີສິດ FAP. Providence ບໍ່ເຮັດ, ອະນຸຍາດ ຫຼື ອະນຸຍາດໃຫ້ໜ່ວຍງານເກັບເງິນເຮັດການເກັບເງິນທີ່ຜິດປົກກະຕິ. ສຳລັບຂໍ້ມູນກ່ຽວກັບການຮຽກເກັບເງິນ ແລະ ການເກັບເງິນຂອງ Providence ສຳລັບຈຳນວນທີ່ຄົນເຈັບເປັນໜີ້, ກະລຸນາເບິ່ງນະໂຍບາຍຂອງໂຮງໝໍ Providence ທີ່ມີໃຫ້ເບິ່ງໂດຍບໍ່ມີຄ່າໃຊ້ຈ່າຍຢູ່ທີ່ໂຕະລົງທະບຽນຂອງໂຮງໝໍ Providence ຫຼື ທີ່: www.providence.org/obp.

**<u>ການຄືນເງິນໃຫ້ລູກຄ້າ:</u>** ໃນກໍລະນີຄົນເຈັບ ຫຼື ຜູ້ຄ້ຳປະກັນໄດ້ຈ່າຍຄ່າບໍລິການ ແລະ ຕໍ່ມາແມ່ນຖືກຕັດສິນວ່າມີສິດຮັບການດູແລປິ່ນປົວທີ່ບໍ່ມີຄ່າໃຊ້ຈ່າຍ ຫຼື ທີ່ມີສ່ວນຫຼຸດ, ເງິນທີ່ໄດ້ຈ່າຍແລ້ວ ທີ່ກ່ຽວກັບການບໍລິການເຫຼົ່ານັ້ນໃນລະຫວ່າງໄລຍະເວລາການມີສິດ FAP ທີ່ເກີນພັນທະໃນການຈ່າຍເງິນ ແມ່ນຈະຖືກສົ່ງຄືນຕາມລະບຽບການຂອງລັດ.

**<u>ການກວດສອບປະຈຳປີ:</u>** ນະໂຍບາຍຊ່ວຍເຫຼືອດ້ານການເງິນ (ການດູແລປິ່ນປົວເພື່ອການກຸສົນ) ຂອງ Providence ສະບັບນີ້ ຈະໄດ້ຮັບການກວດສອບປະຈຳປີໂດຍການນຳ Revenue Cycle ທີ່ຖືກແຕ່ງຕັ້ງ.

**ຂໍ້ຍົກເວັ້ນ:**
ໃຫ້ເບິ່ງຂອບເຂດຂ້າງເທິງ:

**ການອະທິບາຍຄຳສັບ:**
ເພື່ອຈຸດປະສົງຂອງນະໂຍບາຍສະບັບນີ້, ການອະທິບາຍຄຳສັບ ແລະ ເງື່ອນໄຂຕໍ່ໄປນີ້ແມ່ນຈະມີຜົນນຳໃຊ້:

1. ລະດັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Level, FPL): FPL ໝາຍເຖິງຄຳແນະນຳດ້ານຄວາມທຸກຍາກທີ່ໄດ້ຮັບການປັບປຸງເປັນໄລຍະໃນທະບຽນລັດຖະບານກາງໂດຍກະຊວງສາທາລະນະສຸກ ແລະ ການບໍລິການມະນຸດຂອງສະຫາລັດ (Department of Health and Human Services).

2. ຈຳນວນທີ່ຮຽກເກັບໂດຍທົ່ວໄປ (Amounts Generally Billed, AGB): ຈຳນວນທີ່ຮຽກເກັບໂດຍທົ່ວໄປສຳລັບເຫດການສຸກເສີນ ແລະ ການດູແລປິ່ນປົວທີ່ຈຳເປັນທາງການແພດ ສຳລັບຄົນເຈັບທີ່ບໍ່ມີປະກັນສຸຂະພາບ ແມ່ນເອີ້ນໃນນະໂຍບາຍສະບັບນີ້ວ່າ AGB. Providence ກຳນົດເປີເຊັນ AGB ທີ່ມີຜົນນຳໃຊ້ສຳລັບໂຮງໝໍ Providence ແຕ່ລະແຫ່ງ ໂດຍການເອົາຄ່າບໍລິການລວມຂອງໂຮງໝໍ ສຳລັບເຫດການສຸກເສີນ ຫຼື ການດູແລປິ່ນປົວທີ່ຈຳເປັນທາງການແພດໃດໜຶ່ງ ມາຄູນກັບເປີເຊັນຄົງທີ່ ທີ່ອີງຕາມການຮຽກສິດ ທີ່ອະນຸຍາດພາຍໃຕ້ Medicare ແລະ ຜູ້ຈ່າຍເງິນທາງການຄ້າ. ໃບຂໍ້ມູນທີ່ມີລາຍລະອຽດກ່ຽວກັບເປີເຊັນ AGB ທີ່ໃຊ້ໂດຍໂຮງໝໍ Providence ແຕ່ລະແຫ່ງ ແລະ ວິທີຄິດໄລ່ພວກມັນ ແມ່ນສາມາດຮັບເອົາໄດ້ໂດຍການເຂົ້າເບິ່ງເວັບໄຊຕໍ່ໄປນີ້: www.providence.org/obp ຫຼື ໂດຍການໂທຫາ 1-866-747- 2455 ເພື່ອຂໍສຳເນົາ.

3. ການເກັບເງິນທີ່ຜິດປົກກະຕິ (Extraordinary Collection Action, ECA): ECA ແມ່ນຖືກນິຍາມວ່າເປັນການດຳເນີນການ ທີ່ຈຳເປັນຕ້ອງມີຂະບວນການທາງກົດໝາຍ ຫຼື ຍຸຕິທຳ ເຊິ່ງກ່ຽວຂ້ອງກັບການຂາຍໜີ້ສິນໃຫ້ພາກສ່ວນອື່ນຫຼື ການລາຍງານຂໍ້ມູນທີ່ບໍ່ດີໃຫ້ແກ່ໜ່ວຍງານ ຫຼື ສຳນັກງານໜີ້ສິນ. ການດຳເນີນການທີ່ຈຳເປັນຕ້ອງມີຂະບວນການທາງກົດໝາຍ ຫຼື ຍຸຕິທຳ ເພື່ອຈຸດປະສົງນີ້ ແມ່ນມີສິດໃນການຄອບຄອງຊັບສິນ; ການຍຶດອະສັງຫາລິມະຊັບທີ່ຈຳນຳໄວ້; ການຍຶດ ຫຼື ການອາຍັດບັນຊີທະນາຄານ ຫຼື ຊັບສິນສ່ວນຕົວອື່ນໆ; ການເລີ່ມດຳເນີນການທາງແພ່ງຕໍ່ບຸກຄົນ; ການດຳເນີນການທີ່ເຮັດໃຫ້ບຸກຄົນໃດໜຶ່ງຖືກຈັບ; ການດຳເນີນການທີ່ເຮັດໃຫ້ບຸກຄົນໃດໜຶ່ງຖືກຍຶດໂຕບຸກຄົນ; ແລະ ການອາຍັດເງິນຄ່າຈ້າງ.

**ເອກະສານອ້າງອີງ:**

| |
|---|
| *Internal Revenue Code Section 501(r); 26 C.F.R. 1.501(r)(1) – 1.501(r)(7)* |
| *Washington Administrative Code (WAC) Chapter 246-453* |
| *Revised Code of Washington (RCW) Chapter 70.170.060* |
| *Emergency Medical Treatment and Labor Act (EMTALA), 42 U.S.C. 1395dd* |
| *42 C.F.R. 482.55 ແລະ 413.89* |
| *American Hospital Associations Charity Guidelines* |
| *Providence Commitment to the Uninsured Guidelines* |
| *Provider Reimbursement Manual, Part I, Chapter 3, Section 312* |

## ພາກຊ້ອນທ້າຍ A – ລາຍຊື່ສະຖານທີ່ທີ່ໄດ້ຮັບການຄຸ້ມຄອງ

| ໂຮງໝໍ Providence ໃນ Washington | |
|---|---|
| Providence Centralia Hospital | Providence St. Joseph’s Hospital |
| Providence Mount Carmel Hospital | Providence Regional Medical Center Everett |
| Providence St. Peter Hospital | Providence Sacred Heart Medical Center and Children’s Hospital |
| Providence Holy Family Hospital | Providence St. Mary Medical Center |

ເພື່ອຄວາມຊັດເຈນ, ນະໂຍບາຍສະບັບນີ້ຍັງມີຜົນນຳໃຊ້ກັບພະແນກຄົນເຈັບເຂດໃນ ແລະ ຄົນເຈັບເຂດນອກ ແລະ ຄລີນິກທີ່ໄດ້ຮັບການຄຸ້ມຄອງ. ນອກຈາກນັ້ນ, ນະໂຍບາຍສະບັບນີ້ແມ່ນມີຜົນກັບພະນັກງານຂອງສະຖານທີ່ທີ່ໄດ້ຮັບການຄຸ້ມຄອງ ລວມທັງນິຕິບຸກຄົນທີ່ບໍ່ບໍລິຫານເພື່ອຜົນກຳໄລ ຫຼື ທີ່ບໍ່ຫວັງຜົນກຳໄລ ທີ່ສ່ວນໃຫຍ່ແລ້ວແມ່ນເປັນຂອງ ຫຼື ຄວບຄຸມໂດຍ Providence ແລະທີ່ມີຊື່ Providence ແລະ ພະນັກງານຂອງເຂົາເຈົ້າ.

## ພາກຊ້ອນທ້າຍ B - ຄຸນສົມບັດດ້ານລາຍໄດ້ສຳລັບໂຮງໝໍ Providence Washington

| ຖ້າຫາກວ່າ... | ຈາກນັ້ນ ... |
|---|---|
| ລາຍໄດ້ຕໍ່ປີຂອງຄອບຄົວ ທີ່ຖືກປັບໃຫ້ເຂົ້າກັບຂະໜາດຂອງ ຄອບຄົວ ແມ່ນຢູ່ທີ່ ຫຼື ຕໍ່າກວ່າ 300% ຂອງຄ່າແນະນຳ FPL ໃນປະຈຸບັນ. | ຄົນເຈັບຖືກຕັດສິນວ່າ ມີຄວາມທຸກຍາກດ້ານການເງິນ ແລະ ມີຄຸນສົມບັດຮັບການຊ່ວຍເຫຼືອດ້ານການເງິນ 100% ໂດຍມີການລົງບັນຊີເປັນໜີ້ສູນ ສຳລັບຈຳນວນທີ່ຄົນເຈັບຮັບຜິດຊອບ. |
| ລາຍໄດ້ຕໍ່ປີຂອງຄອບຄົວ ທີ່ຖືກປັບໃຫ້ເຂົ້າກັບຂະໜາດຂອງຄອບຄົວ ແມ່ນຢູ່ລະຫວ່າງ 301% ແລະ 400% ຂອງຄ່າແນະນຳ FPL ໃນປະຈຸບັນ. | ຄົນເຈັບແມ່ນມີສິດຮັບສ່ວນຫຼຸດ 75% ຈາກຄ່າບໍລິການເດີມ ສຳລັບຈຳນວນທີ່ຄົນເຈັບຮັບຜິດຊອບ. |
| ຖ້າລາຍໄດ້ຕໍ່ປີຂອງຄອບຄົວ ທີ່ຖືກປັບໃຫ້ເຂົ້າກັບຂະໜາດຂອງ ຄອບຄົວ ແມ່ນຢູ່ທີ່ ຫຼື ຕໍ່າກວ່າ 400% ຂອງລາຍຈ່າຍທາງການແພດທັງໝົດຂອງ FPL ແລະ ຄົນເຈັບທີ່ໂຮງໝໍ Providence ໃນ 12 ເດືອນກ່ອນໜ້ານັ້ນ ເຊິ່ງເກີນ 20% ຂອງລາຍໄດ້ຕໍ່ປີຂອງຄອບຄົວ ທີ່ຖືກປັບໃຫ້ເຂົ້າກັບຂະໜາດຂອງ ຄອບຄົວ ສຳລັບການບໍລິການທີ່ຂຶ້ນກັບນະໂຍບາຍສະບັບນີ້. | ຄົນເຈັບແມ່ນມີສິດຮັບສະຫວັດດີການການກຸສົນ 100% ສຳລັບຈຳນວນທີ່ຄົນເຈັບຮັບຜິດຊອບ. |